ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 005 /ທຄຕລ 2018
ນະຄອນຫຼວງວຽງຈັນ, ວັນທີ, 21/05/2018

**ຂໍ້ຕົກລົງ**
**ວ່າດ້ວຍການສ້າງຕັ້ງສາຂາໄຊເສດຖາ**
**ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

- ອີງຕາມມະຕິຕົກລົງຂອງສະພາບໍລິຫານ ທຄຕລ ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2017 ວັນທີ 31/10/2017;
- ອີງຕາມໃບອະນຸຍາດສ້າງຕັ້ງສາຂາທະນາຄານ ຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 14/ທຫລ, ລົງວັນທີ 09 ພຶດສະພາ 2018.

**ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ:**

**ມາດຕາ 1:** ເຫັນດີສ້າງຕັ້ງ **ສາຂາໄຊເສດຖາ (Saysettha Branch)** ທີ່ຕັ້ງຢູ່ອາຄານ S03 ໃນເຂດສາທິດກິດຈະກຳການເງິນສາກົນວຽງຈັນສະກາຍຊິຕີ, ບ້ານສີບຸນເຮືອງ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ມາດຕາ 2:** ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປັນຜູ້ຄຸ້ມຄອງການເຄື່ອນໄຫວຂອງສາຂາດັ່ງກ່າວ ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ແລະ ທຄຕລ ວາງອອກໃນແຕ່ລະໄລຍະ.

**ມາດຕາ 3:** ມອບໃຫ້ບັນດາພະແນກ, ສູນ, ສາຂາ ຂອງ ທຄຕລ ໃນທົ່ວລະບົບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ແຫ່ງ ສປປ ລາວ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ຫລວງ ວຽງຈັນ

ພູຂົງ ຈັນທະຈັກ